# ຄຳສັ່ງການໃສ່ໜ້າກາກໃນຮົ່ມ ຄຳແນະນຳສຳລັບທຸລະກິດ

ເຈົ້າຂອງກິດຈະການມີທາງເລືອກໃນການປະຕິບັດຕາມຄຳແນະນຳການໃສ່ໜ້າກາກໃນຮົ່ມໃນສະຖານທີ່ປະກອບການຂອງຕົນ.

**ເນື່ອງຈາກວ່າບໍ່ມີວິທີງ່າຍໆໃນການກວດສອບສະຖານະການສັກວັກຊີນຂອງທຸກຄົນທີ່ເຂົ້າມາໃນອາຄານ**, Local Health Officer Directive (ຄຳສັ່ງຂອງຫ້ອງການສາທາລະນະສຸກທ້ອງຖິ່ນ) ຂອງ King County **ຮຽກຮ້ອງໃຫ້ບັນດາທຸລະກິດຕ່າງໆດຳເນີນການບັງຄັບໃສ່ໜ້າກາກສຳລັບພະນັກງານ ແລະ ລູກຄ້າທຸກຄົນ** ໃນສະຖານທີ່ໃນຮົ່ມ.

| **ການດຳເນີນການ** | **ຮຽກຮ້ອງໃຫ້** (ໂດຍ DOH ຫຼື L&I) | **ເຫັນດີສະໜັບສະໜູນເຕັມທີ່** (ຕາມຄຳສັ່ງຂອງ King County) | **ຕົວເລືອກສຳລັບໜ່ວຍທຸລະກິດ** |
|---|---|---|---|
| ຕິດປ້າຍເພື່ອລະບຸສື່ສານວ່າການໃສ່ໜ້າກາກແມ່ນຈຳເປັນສຳລັບຄົນທີ່ຍັງບໍ່ທັນສັກວັກຊີນ ແລະ ໄດ້ສັກວັກຊີນບາງສ່ວນໃນພາສາທີ່ກິດຈະການໃຊ້ຫຼາຍທີ່ສຸດ | X | **ຕິດປ້າຍທີ່ສົ່ງເສີມໃຫ້ທຸກຄົນໃສ່ໜ້າກາກ** | |
| <u>**ສຳລັບພະນັກງານ:**</u> | | | |
| ກຳນົດໃຫ້ພະນັກງານທີ່ຍັງບໍ່ທັນສັກວັກຊີນ ຫຼື ໄດ້ສັກວັກຊີນບາງສ່ວນໃສ່ໜ້າກາກ | X | | |
| ກຳນົດໃຫ້ພະນັກງານທີ່ສັກວັກຊີນຄົບຖ້ວນແລ້ວໃສ່ໜ້າກາກ | | X | X |
| ຕ້ອງມີຫຼັກຖານຢືນຢັນການສັກວັກຊີນຈາກພະນັກງານເພື່ອເຮັດວຽກໂດຍບໍ່ໃສ່ໜ້າກາກ | **ຈຳເປັນຖ້າຫາກກິດຈະການອະນຸຍາດໃຫ້ພະນັກງານທີ່ສັກວັກຊີນແລ້ວເຮັດວຽກໂດຍບໍ່ໃສ່ໜ້າກາກ** | | X |
| <u>**ສຳລັບລູກຄ້າ:**</u> | | | |
| ກຳນົດໃຫ້ລູກຄ້າທີ່ຍັງບໍ່ທັນສັກວັກຊີນ ຫຼື ໄດ້ສັກວັກຊີນບາງສ່ວນຕ້ອງໃສ່ໜ້າກາກ | X | | |
| ກຳນົດລູກຄ້າທີ່ສັກວັກຊີນຄົບຖ້ວນແລ້ວຕ້ອງໄດ້ໃສ່ໜ້າກາກ | | X | X |
| ຂໍຫຼັກຖານຢືນຢັນການສັກວັກຊີນຈາກລູກຄ້າ | | | X |

ຕາຕະລາງຂ້າງເທິງແມ່ນລາຍລະອຽດກ່ຽວກັບສິ່ງທີ່ຖືກກຳນົດ ແລະ ແນະນຳໂດຍ Department of Health (DOH, ພະແນກສາທາລະນະສຸກ) ຂອງລັດວໍຊິງຕັນ, Department of Labor and Industries (L&I, ພະແນກແຮງງານ ແລະ ອຸດສາຫະກຳ) ຂອງລັດວໍຊິງຕັນ ແລະ Public Health – Seattle & King County (ສາທາລະນະສຸກ - ຊີອາເຕິລ ແລະ ຄິງຄາວຕີ້).



Public Health
Seattle & King County



# ການກຳນົດໃຫ້ໃສ່ໜ້າກາກແມ່ນ <u>ວິທີປອດໄພທີ່ສຸດ</u> ແລະ <u>ງ່າຍທີ່ສຸດ</u> ເພື່ອປົກປ້ອງພະນັກງານ, ລູກຄ້າ ແລະ ຊຸມຊົນຂອງທ່ານ.

**ເຖິງຢ່າງໃດກໍ່ຕາມ, ຖ້າຫາກທ່ານເລືອກທີ່ຈະອະນຸຍາດໃຫ້ພະນັກງານ ແລະ ລູກຄ້າທີ່ສັກຢາຄົບຖ້ວນແລ້ວເຂົ້າໄດ້ໂດຍບໍ່ຕ້ອງໃສ່ໜ້າກາກ,** ນີ້ແມ່ນສິ່ງທີ່ທ່ານສາມາດເຮັດໄດ້ໃນຂະທີ່ປະຕິບັດຕາມຄຳສັ່ງການໃສ່ໜ້າກາກ:

1. **ກວດສອບສະຖານະການສັກວັກຊີນຂອງທຸກຄົນ** ທີ່ເຂົ້າໄປໃນພື້ນທີ່. ແບບຟອມເອກະສານການສັກວັກຊີນທີ່ຍອມຮັບໄດ້ມີ:
    - ບັດແຈ້ງການສັກວັກຊີນຂອງ Centers for Disease Control and Prevention (CDC, ບັດແຈ້ງການສັກວັກຊີນຂອງສູນຄວບຄຸມ ແລະ ປ້ອງກັນພະຍາດ)
    - ຮູບຂອງບັດ
    - ເອກະສານຈາກຜູ້ໃຫ້ການເບິ່ງແຍງດູແລສຸຂະພາບ
    - ເອກະສານຈາກລະບົບຂໍ້ມູນຂ່າວສານກ່ຽວກັບລະບົບພູມຕ້ານທານຂອງລັດ

    
    

    ຫຼັກຖານຂອງລະບົບການກວດສອບນີ້ຕ້ອງມີໃຫ້ແກ່ L&I ຕາມການຂໍ. ການກວດສອບສະຖານະການສັກວັກຊີນຂອງພະນັກງານແມ່ນຂໍ້ກຳນົດຈາກ L&I ຖ້າຫາກກິດຈະການອະນຸຍາດໃຫ້ພະນັກງານເຮັດວຽກໂດຍບໍ່ໃສ່ໜ້າກາກ.

2. **ສ້າງລະບົບ ຫຼື ຂັ້ນຕອນເພື່ອຕິດຕາມວ່າຜູ້ທີ່ຍັງບໍ່ໄດ້ສັກວັກຊີນຍັງສືບຕໍ່ໃສ່ໜ້າກາກ.** ນີ້ອາດຈະຄ້າຍຄື;
    - ການສ້າງພື້ນທີ່ສະເພາະແກ່ຜູ້ທີ່ໄດ້ສັກວັກຊີນພາຍໃນອາຄານ, ດ້ວຍໄລຍະຫ່າງຈາກພື້ນທີ່ຂອງຜູ້ທີ່ຍັງບໍ່ໄດ້ສັກວັກຊີນຢ່າງໜ້ອຍ 6 ຟຸດ
    - ກຳນົດຊ່ວງເວລາຕໍ່ມື້ທີ່ລູກຄ້າທຸກຄົນຕ້ອງໃສ່ໜ້າກາກ ແລະ ຊ່ວງເວລາອື່ນໆໃຫ້ແກ່ລູກຄ້າທີ່ສັກວັກຊີນຄົບແລ້ວອາດຈະບໍ່ຈຳເປັນຕ້ອງໃສ່ໜ້າກາກ.

3. **ຄົນທີ່ຍັງບໍ່ທັນໄດ້ສັກວັກຊີນ ຫຼື ໄດ້ສັກວັກຊີນບາງສ່ວນຕ້ອງໃສ່ໜ້າກາກ ແລະ ຮັກສາໄລຍະຫ່າງຕະຫຼອດເວລາ.**



ສຳລັບຄຳຖາມເພີ່ມເຕີມ, ຕິດຕໍ່ coronavirus@kingcounty.gov (ຄຳຕອບແມ່ນມີໃຫ້ເປັນພາສາລາວ).

Local Health Officer Directive (20 ພຶດສະພາ 2021) ຈະຍັງຄົງມີຜົນບັງຄັບໃຊ້ຈົນກວ່າ King County ຢືນຢັນວ່າ 70% ຂອງຜູ້ຢູ່ອາໄສທີ່ອາຍຸ 16 ປີຂຶ້ນໄປໄດ້ຮັບການສັກວັກຊີນຄົບຖ້ວນແລ້ວຢູ່ໃນ King County. ເມື່ອບັນລຸຜົນສິ່ງນີ້ແລ້ວ, **ກິດຈະການຍັງຄົງຕໍ່ປະຕິບັດຕາມຄຳແນະນຳການໃສ່ໜ້າກາກຂອງ DOH ແລະ L&I ຕາມທີ່ໄດ້ລະບຸໄວ້ໃນເອກະສານສະບັບນີ້.**

ຮຽນຮູ້ເພີ່ມເຕີມກ່ຽວກັບຄຳແນະນຳການປົດໜ້າສຳລັບທຸລະກິດຂອງ DOH. (ເວັບໄຊເປັນພາສາອັງກິດເທົ່ານັ້ນ)



8 ມິຖຸນາ 2021